ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ຮ່ວມບໍລິຈາກ ອາຫານ, ເຄື່ອງດື່ມ ແລະ ຢາ ໃຫ້ແກ່ຜູ້ປະສົບໄພນ້ຳຖ້ວມ ທີ່ ແຂວງ ຫຼວງນ້ຳທາ

ວັນທີ 14 ກັນຍາ 2024 ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ມອບເຄື່ອງຊ່ວຍເຫຼືອ ອາຫານ, ເຄື່ອງດື່ມ ແລະ ຢາ ຈຳນວນ 100 ຊຸດ ມູນຄ່າ 20,500,000 ກີບ ເພື່ອບັນເທົາຄວາມເດືອດຮ້ອນແກ່ຜູ້ປະສົບໄພນ້ຳຖ້ວມ ທີ່ ແຂວງຫຼວງນ້ຳທາ ຜ່ານທາງສະມາຄົມອາສາກູ້ໄພນະຄອນຫຼວງ 1624 ຕາງໜ້າຮັບໂດຍທ່ານ ຄຳເຜົ້າ ບົວພັນ ຮອງ ປະທານ ໜ່ວຍບັນເທົາຄວາມທຸກຍາກ ເຊິ່ງຈະນຳເຄື່ອງດັ່ງກ່າວເດີນທາງໄປໃນພື້ນທີ່ ເພື່ອມອບໃຫ້ແກ່ຜູ້ປະສົບໄພ.

ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ຂໍເປັນສ່ວນໜຶ່ງໃນການສົ່ງກຳລັງໃຈ ແລະ ຄວາມຊ່ວຍເຫຼືອໃຫ້ກັບຜູ້ ປະສົບໄພນ້ຳຖ້ວມ ແຂວງຫຼວງນ້ຳທາ ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ຂໍໃຫ້ທຸກຄົນປອດໄພ ແລະ ຜ່ານພົ້ນວິກິດ ໃນຄັ້ງນີ້ໄປດ້ວຍດີ.

ສຸວັນນີ ໂຮມເຊັ້ນເຕີ ຈິນຕະນາການທີ່ເປັນໄປໄດ້

ເບີໂທ: (+856-21) 415645 / 021 561111 Whatsapp: (+856-20) 96 935 223

ເວັບໄຊ: www.souvanny.la

